**ມິຊຊາອາທິດທີ 8 ການົດທຳມະດາ**

**ວັນທີ 27 ກຸມພາ 2022**



**ພຣະວໍລະສານໂດຍນັກບຸນລູກາ 6, 39-45**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວຄວາມປຽບທຽບໃຫ້ພວກເຂົາຟັງອີກວ່າ: ຄົນຕາບອດຈະຈູງຄົນຕາບອດໄປໄດ້ບໍ? ທັງສອງຈະບໍ່ພາກັນຕົກຂຸມບໍ? ສິດບໍ່ລື່ນອາຈານ. ແຕ່ສິດທຸກຄົນທີ່ຮຽນສຳເລັດແລ້ວກໍຈະສະເໝີກັບອາຈານ.

ເຫດໃດເຈົ້າຈຶ່ງແນມເຫັນຂີ້ເຫຍື່ອຢູ່ໃນຕາອ້າຍນ້ອງເຈົ້າໄດ້? ສ່ວນທ່ອນໄມ້ທີ່ຢູ່ໃນຕາຂອງເຈົ້າເອງນັ້ນ ເຈົ້າແນມບໍ່ເຫັນ! ດັ່ງນີ້ເຈົ້າຈະເວົ້າກັບອ້າຍນ້ອງຂອງເຈົ້າໄດ້ຢ່າງໃດວ່າ: ອ້າຍເອີຍ! ປະໃຫ້ເຮົາເອົາຂີ້ເຫຍື່ອອອກຈາກຕາຂອງເຈົ້າແນ່ ແລ້ວເຈົ້າເອງບໍ່ເຫັນທ່ອນໄມ້ຢູ່ໃນຕາຂອງເຈົ້າຊ້ຳ. ຄົນໜ້າຊື່ໃຈຄົດເອີຍ! ໃຫ້ເອົາທ່ອນໄມ້ອອກຈາກຕາຂອງເຈົ້າເສຍກ່ອນ ແລ້ວຈຶ່ງຄ່ອຍເອົາຂີ້ເຫຍື່ອອອກຈາກຕາອ້າຍນ້ອງຂອງເຈົ້າ.

ຕົ້ນໄມ້ດີເກີດໝາກຂີ້ຮ້າຍບໍ່ໄດ້ ແລະກົກໄມ້ຂີ້ຮ້າຍເກີດໝາກດີກໍບໍ່ໄດ້ຄືກັນ. ເຮົາຮູ້ຈັກກົກໄມ້ແຕ່ລະກົກໄດ້ດ້ວຍເບິ່ງໝາກຂອງມັນ. ບໍ່ມີໃຜເກັບເອົາໝາກເດື່ອມາຈາກກົກໜາມ ຫລືເດັດເອົາພວງໝາກອະງຸ່ນມາຈາກກໍໜາມໄດ້. ຄົນຜູ້ດີກໍເອົາແຕ່ສິ່ງທີ່ດີມາຈາກຄັງອັນດີແຫ່ງດວງໃຈຂອງຕົນ. ສ່ວນຄົນຊົ່ວກໍເອົາແຕ່ແນວຊົ່ວມາຈາກຫົວໃຈຊົ່ວຂອງເຂົາ. ຍ້ອນວ່າປາກເຮົາມັກເວົ້າແຕ່ເລື່ອງທີ່ເຕັມລົ້ນຫົວໃຈອອກມາ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າວັນອາທິດນີ້ແມ່ນສືບຕໍ່ຈາກອາທິດທີ່ແລ້ວຊຶ່ງພຣະເຢຊູເຈົ້າສອນພວກເຮົາໃຫ້ມີໃຈເມດຕາກະລຸນາເໝືອນກັບພຣະບິດາເຈົ້າສະຫວັນຜູ້ມີພຣະໄທເມດຕາກະລຸນາ. ຄວາມເມດຕາກະລຸນານີ້ສະແດງອອກດ້ວຍຄວາມຮັກແລະການໃຫ້ອະໄພຢ່າງບໍ່ມີຂອບເຂດແລະເງື່ອນໄຂຕໍ່ທຸກຄົນ, ເປັນຕົ້ນຕໍ່ຜູ້ທີ່ເປັນສັດຕູກັບພວກເຮົາ.

ວັນນີ້ພຣະເຢຊູເຈົ້າສືບຕໍ່ໃຊ້ຄວາມປຽບທຽບກ່ຽວກັບ « ດວງຕາ » ແລະ « ຜົນລະປູກ » ເພື່ອສອນພວກເຮົາ. ແນ່ນອນຄົນຕາບອດບໍ່ສາມາດແນມເຫັນຄົນອື່ນແລະຍິ່ງໄປກວ່ານັ້ນເຂົາບໍ່ສາມາດຈະຊີ້ນຳຄົນອື່ນໃຫ້ໄປໃນທາງທີ່ຖືກຕ້ອງໄດ້. ເຊັ່ນດຽວກັບຄົນທີ່ບໍ່ສາມາດແນມເຫັນຂີ້ເຫຍື່ອໃນຕາຂອງຕົນ. ທັງສອງກໍລະນີນີ້ລ້ວນແຕ່ຕ້ອງການອຸປະກອນຄວາມຊ່ວຍເຫລືອເພື່ອຈະໄດ້ເຫັນແຈ້ງສຳລັບຊ່ວຍເຫລືອຕົວເອງແລະຊ່ວຍເຫລືອຄົນອື່ນ. ແລະອຸປະກອນຄວາມຊ່ວຍເຫລືອນີ້ແມ່ນວາຈາພຣະເຈົ້ານັ້ນເອງ. ຜູ້ທີ່ນຳວາຈາພຣະເຈົ້າມາປະຕິບັດໃນຊີວິດບໍ່ພຽງແຕ່ເຂົາເອງຈະໄດ້ເຫັນແຈ້ງເຖິງຄວາມຂາດຕົກບົກຜ່ອງແລະຄວາມອ່ອນແອຂອງຕົນເພື່ອຈະໄດ້ດັດແປງແກ້ໄຂເທົ່ານັ້ນ, ແຕ່ເຂົາຍັງສາມາດເປັນແສງສະວ່າງເພື່ອນຳພາຄົນອື່ນໃຫ້ກັບມາຫາເສັ້ນທາງອັນຊື່ກົງໄດ້ອີກດ້ວຍ. ເພາະວາຈາພຣະເຈົ້າປຽບເໝືອນເມັດພືດທີ່ດີ. ຖ້າຜູ້ໃດເປີດໃຈຮັບເອົາເມັດພືດນີ້ເຂົ້າໃນຊີວິດຂອງຕົນ, ແນ່ນອນໝາກຜົນທີ່ໄດ້ຮັບຍ່ອມເປັນໝາກຜົນທີ່ດີ. ຍ້ອນກົກໄມ້ດີຍ່ອມໃຫ້ໝາກຜົນທີ່ດີ. ກົງກັນຂ້າມ, ຜູ້ທີ່ຟັງວາຈາພຣະເຈົ້າແລ້ວ ຫາກບໍ່ນຳມາປະຕິບັດໃນຊີວິດ, ເຂົາປຽບເໝືອນຄົນທີ່ມີດວງຕາແຕ່ຂາດແສງສະວ່າງ. ບໍ່ພຽງແຕ່ເຂົາເອງຈະຕົກຂຸມແຕ່ເຂົາຍັງເປັນເຫດໃຫ້ຄົນອື່ນຕົກເຫວໄປນຳອີກດ້ວຍ. ເພາະເຂົາບໍ່ສາມາດແນມເຫັນຈຸດບົກຜ່ອງແລະສິ່ງບໍ່ດີຂອງຕົນເພື່ອກັບຈິດປ່ຽນໃຈ. ດັ່ງນັ້ນຊີວິດຂອງເຂົາຈຶ່ງປຽບເໝືອນກົກໄມ້ທີ່ບໍ່ດີ ແລະແນ່ນອນໝາກຜົນທີ່ໄດ້ຮັບກໍບໍ່ດີເຊັ່ນດຽວກັນ.

ສ່ວນພວກເຮົາເດ, ພວກເຮົາໄດ້ໃຫ້ແສງສະວ່າງແຫ່ງວາຈາພຣະເຈົ້າຊີ້ນຳພວກເຮົາບໍ? ພວກເຮົາໄດ້ເດີນຕາມແສງສະວ່າງນີ້ດ້ວຍການປະຕິບັດຕາມວາຈາຂອງພຣະເຈົ້າບໍ? ແລະສິ່ງສຳຄັນຄືພວກເຮົາໄດ້ປະກາດແລະເປັນພິຍານເຖິງວາຈາຂອງພຣະເຈົ້າບໍ?

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດເປີດດວງຕາ, ດວງໃຈຂອງລູກ. ເພື່ອລູກຈະໄດ້ເຫັນແສງສະວ່າງແຫ່ງວາຈາຂອງພຣະອົງແລະເພື່ອລູກຈະໄດ້ເຂົ້າໃຈແລະນຳມາປະຕິບັດໃຫ້ເກີດຜົນໃນຊີວິດຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ